ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===-------

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0716/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2013

# ຂໍ້ຕົກລົງ

## ວ່າດ້ວຍ ການມອບສິດໃຫ້ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ - ໂນນທອງ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າ

- ອີງຕາມດຳລັດສະບັບເລກທີ 552/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ອຸດສາຫະກຳ ແລະ ການຄ້າ;
- ອີງຕາມດຳລັດສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010 ວ່າດ້ວຍ ແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ;
- ອີງຕາມໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 2262/ກຂອ, ລົງວັນທີ 5 ເມສາ 2013.

## ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ ດັ່ງນີ້:

ມາດຕາ 1. ມອບສິດໃຫ້ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດພິເສດດ້ານການຄ້າ ສຳລັບສິນຄ້າທີ່ຜະລິດຈາກໂຮງງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ເພື່ອເປັນການຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ຫົວໜ່ວຍທຸລະກິດທີ່ເຂົ້າມາລົງທຶນຢູ່ໃນເຂດດັ່ງກ່າວ.

ມາດຕາ 2. ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແມ່ນໃຫ້ອອກແກ່ແຕ່ສະເພາະສິນຄ້າທີ່ຜະລິດໄດ້ຕາມເງື່ອນໄຂຂອງລະບຽບແຫຼ່ງກຳເນີດສິນຄ້າທີ່ກ່ຽວຂ້ອງກຳນົດໄວ້ເທົ່ານັ້ນ. ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ຕ້ອງໄດ້ຮັບຜິດຊອບຕໍ່ທຸກການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງຕົນ.

ມາດຕາ 3. ມອບໃຫ້ເຂດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ-ໂນນທອງ ແຕ່ງຕັ້ງພະນັກງານ ຜູ້ທີ່ມີເງື່ອນໄຂໃນການເຊັນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລ້ວແຈ້ງໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ພ້ອມດ້ວຍແບບຢ່າງລາຍເຊັນ ເພື່ອແຈ້ງຕໍ່ໃຫ້ປະເທດທີ່ກ່ຽວຂ້ອງຕາມລະບຽບການທີ່ກຳນົດໄວ້.

ມາດຕາ 4. ມອບໃຫ້ເຂດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ - ໂນນທອງ ຄົ້ນຄວ້າ ແລະ ອອກລະບຽບການຄຸ້ມຄອງວຽກງານດັ່ງກ່າວ ບົນພື້ນຖານຖືກຕ້ອງສອດຄ່ອງກັບນະໂຍບາຍ ແລະ ລະບຽບການຕ່າງໆຂອງ ສປປ ລາວ ແລະ ບັນດາປະເທດທີ່ກ່ຽວຂ້ອງ.

ມາດຕາ 5. ເພື່ອຮັບປະກັນຫຼັກການຄຸ້ມຄອງລັດ, ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ຕ້ອງປະຕິບັດຫຼັກການສະເໝີພາບ, ໂປ່ງໃສ, ເປັນທຳຕໍ່ທຸກຫົວໜ່ວຍທຸລະກິດສົ່ງອອກ ພາຍໃນເຂດນິຄົມຂອງຕົນ, ປະຕິບັດໜ້າທີ່ໃນການເກັບຄ່າທຳນຽມ ແລະ ຄ່າບໍລິການຕາມລັດຖະບັນຍັດເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ເພື່ອມອບເຂົ້າງົບປະມານ ພ້ອມທັງລາຍງານ ແລະ ສະຫຼຸບລາຍງານໃຫ້ກະຊວງຊາບເປັນແຕ່ລະໄລຍະ (ເດືອນ, ງວດ, ປີ).

ມາດຕາ 6. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຊີ້ນຳຢ່າງໃກ້ຊິດ ແລະ ເຮັດບົດແນະນຳລະອຽດຕື່ມໃນການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕົວຈິງ ເພື່ອໃຫ້ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຖືກຕ້ອງຕາມລະບຽບການ.

ມາດຕາ 7. ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເປັນເອກະພາບ ແລະ ມີປະສິດທິຜົນສູງສຸດ.

ມາດຕາ 8. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 1 ກໍລະກົດ 2013 ເປັນຕົ້ນໄປ.

ລັດຖະມົນຕີ ວ່າການ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

ບ່ອນສົ່ງ: - ທ່ານລັດຖະມົນຕີຊ່ວຍ ເພື່ອຊາບ

- ກົມພາສີ, ກະຊວງການເງິນ ເພື່ອຊາບ
- ເຂດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ - ໂນນທອງ ເພື່ອຊາບ ແລະ ປະຕິບັດ
- ບັນດາກົມອ້ອມຂ້າງກະຊວງ ເພື່ອຊາບ
- ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ ເພື່ອຊາບ
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເພື່ອຊາບ